ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

# ກົດໝາຍ
# ວ່າດ້ວຍຂໍ້ຜູກພັນນອກສັນຍາ

## ພາກທີ I
## ວ່າດ້ວຍຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນ ຂອງບຸກຄົນອື່ນ ຂອງສັດ ສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນ.

### ໝວດທີ 1
### ຄວາມຮັບຜິດຊອບທີ່ເນື່ອງມາຈາກ ການກະທຳຂອງຕົນເອງ.

ມາດຕາ 1 : ພື້ນຖານຂອງຄວາມຮັບຜິດຊອບ ທີ່ເນື່ອງມາຈາກການກະທຳຂອງຕົນເອງ.

ບຸກຄົນຜູ້ໃດຫາກໄດ້ກໍ່ຄວາມເສັຽຫາຍໃຫ້ແກ່ຜູ້ອື່ນດ້ວຍການກະທຳຂອງຕົນເອງ ບຸກຄົນຜູ້ນັ້ນຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍທີ່ຕົນໄດ້ກໍ່ຂຶ້ນ ເວັ້ນເສັຽແຕ່ຄວາມເສັຽຫາຍທີ່ເກີດຂຶ້ນນັ້ນຫາກບໍ່ແມ່ນຍ້ອນຄວາມຜິດຂອງຕົນ, ການປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ແລະ ການປ້ອງກັນຕົວ.

ມາດຕາ 2 : ລັກສະນະຂອງຄວາມເສັຽຫາຍ.

ຄວາມເສັຽຫາຍທີ່ເນື່ອງມາຈາກການກະທຳຂອງບຸກຄົນຜູ້ໃດຜູ້ໜຶ່ງນັ້ນຕ້ອງມີລັກສະນະແນ່ນອນ ໝາຍຄວາມວ່າ ໄດ້ເກີດຂຶ້ນແລ້ວ ຫລື ແນ່ນອນຈະເກີດຂຶ້ນໃນອະນາຄົດ. ຈະບໍ່ຖືວ່າເປັນຄວາມເສັຽຫາຍທີ່ແນ່ນອນ ຖ້າຫາກແມ່ນຄວາມເສັຽຫາຍທີ່ອາດຈະເກີດຂຶ້ນ ຫລື ບໍ່ ເກີດຂຶ້ນໃນອານາຄົດ. ນອກນີ້ຄວາມເສັຽຫາຍທີ່ກໍ່ຂຶ້ນຕ້ອງແມ່ນຄວາມເສັຽຫາຍໂດຍກົງໝາຍຄວາມວ່າເປັນຜົນສະທ້ອນໂດຍກົງ ຂອງການກະທຳຜິດ. ຄວາມເສັຽຫາຍທີ່ໄດ້ກໍ່ຂຶ້ນນັ້ນ ຍັງຕ້ອງເປັນການລະເມີດຜົນປະໂຫຍດອັນຊອບທຳຂອງບຸກຄົນອື່ນອີກ.

ມາດຕາ 3 : ປະເພດຂອງຄວາມເສັຽຫາຍ.

ຄວາມເສັຽຫາຍອາດເກີດຂຶ້ນແກ່ຊີວິດ ສຸຂະພາບ ຊັບສິ່ງຂອງ ຫລື ຈິດໃຈຂອງບຸກຄົນອື່ນ.

ມາດຕາ 4 : ອົງປະກອບຂອງຄວາມຜິດ.

ຄວາມຜິດ ສະແດງອອກດ້ວຍການກະທຳ ຫລື ການເມີນເສີຍ ຊຶ່ງລະເມີດກົດຫມາຍ ແລະ ກໍ່ຄວາມເສັຽຫາຍໃຫ້ແກ່ບຸກຄົນອື່ນໂດຍເຈດຕະນາ ຫລື ດ້ວຍຄວາມບໍ່ລະມັດລະວັງ.

ມາດຕາ 5 : ສາຍພົວພັນເຫດ ແລະ ຜົນ ລະຫວ່າງການກະທຳ ທີ່ລະເມີດກົດຫມາຍ ກັບຄວາມເສັຽຫາຍ.

ຈະມີຄວາມຮັບຜິດຊອບຕໍ່ການໃຊ້ແທນຄ່າເສັຽຫາຍໄດ້ນັ້ນກໍຕໍ່ເມື່ອຫາກມີສາຍພົວພັນເຫດ ແລະ ຜົນລະຫວ່າງ ການກະທຳ ທີ່ລະເມີດກົດຫມາຍກັບຄວາມເສັຽຫາຍທີ່ເກີດຂຶ້ນ.

ມາດຕາ 6 : ຄວາມເສັຽຫາຍທີ່ເນື່ອງມາຈາກການນຳໃຊ້ສິດເກີນຄວນ.

ບຸກຄົນຜູ້ໃດຫາກໄດ້ນຳໃຊ້ສິດຂອງຕົນເກີນຄວນ ໂດຍເຈດຕະນາ ບຸກຄົນຜູ້ນັ້ນ ຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍ ທີ່ເນື່ອງມາຈາກການໃຊ້ສິດເກີນຄວນນັ້ນ.

ມາດຕາ 7 : ຄວາມຮັບຜິດຊອບຕໍ່ຄວາມເສັຽຫາຍທີ່ເນື່ອງມາຈາກ ສະພາວະທີ່ຈຳເປັນ.

ຄວາມເສັຽຫາຍທີ່ເນື່ອງມາຈາກ ສະພາວະທີ່ຈຳເປັນຕ້ອງໄດ້ຮັບການໃຊ້ແທນ.

ອີງໃສ່ສະພາບການຕົວຈິງ ສານອາດຈະໃຫ້ຜູ້ກະທຳ ຫລື ບຸກຄົນທີສາມ ຊຶ່ງໄດ້ຮັບຜົນປະໂຫຍດຈາກການກະທຳ ຂອງຜູ້ກໍ່ຄວາມເສັຽຫາຍນັ້ນ ເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສັຽຫາຍກໍໄດ້.

ມາດຕາ 8 : ຄວາມຮັບຜິດຊອບຕໍ່ຄວາມເສັຽຫາຍທີ່ຫລາຍຄົນໄດ້ເປັນຜູ້ກໍ່ຂຶ້ນ.

ບັນດາບຸກຄົນ ຊຶ່ງໄດ້ຮ່ວມກັນກໍ່ຄວາມເສັຽຫາຍ ຕ້ອງຮັບຜິດຊອບຮ່ວມກັນ ຕໍ່ຄວາມເສັຽຫາຍທີ່ພວກຕົນໄດ້ກໍ່ຂຶ້ນນັ້ນ ສານອາດຈະໃຫ້ຜູ້ໃດຜູ້ຫນຶ່ງ ຫລື ຫລາຍຄົນ ໃນຈຳນວນຜູ້ກໍ່ຄວາມເສັຽຫາຍນັ້ນ ໃຊ້ແທນຄ່າເສັຽຫາຍທັງຫມົດກໍໄດ້, ແຕ່ຜູ້ນີ້ ມີສິດທວງເອົານຳບຸກຄົນ ທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນຄືນ.

ມາດຕາ 9 : ການຄິດໄລ່ ການໃຊ້ແທນຄ່າເສັຽຫາຍ ແລະ ຄ່າປ່ວຍການ.

ການຄິດໄລ່ ການໃຊ້ແທນຄ່າເສັຽຫາຍ ແລະ ຄ່າປ່ວຍການ ຕ້ອງໃຫ້ສອດຄ່ອງກັບຄວາມຜິດຂອງຜູ້ກໍ່ຄວາມເສັຽຫາຍ.

ໃນກໍລະນີ ທີ່ຜູ້ຖືກເສັຽຫາຍ ຫາກມີຄວາມຜິດ ຜູ້ກ່ຽວກໍຕ້ອງມີສ່ວນຮັບຜິດຊອບ ຕໍ່ຄວາມເສັຽຫາຍ ແລະ ຄ່າປ່ວຍການນັ້ນເໝືອນກັນ.

ນອກຈາກຄ່າເສັຽຫາຍແລ້ວ ຜູ້ກໍ່ຄວາມເສັຽຫາຍອາດຈະຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການນໍາອີກ ເຊັ່ນ : ລາຍຮັບຊຶ່ງຜູ້ຖືກເສັຽຫາຍຄວນຈະໄດ້, ຄ່າໃຊ້ຈ່າຍເພີ້ມ ຂອງຜູ້ຖືກເສັຽຫາຍ ຊຶ່ງເນື່ອງມາຈາກ ການກະທໍາຜິດ.

## ໝວດທີ 2
## ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທໍາ
## ຂອງບຸກຄົນອື່ນ, ຂອງສັດ, ສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນ

ມາດຕາ 10 : ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ.

ຜູ້ໃຊ້ວຽກຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍ ທີ່ຜູ້ຮັບໃຊ້ວຽກຂອງຕົນໄດ້ກໍ່ຂຶ້ນ ໃຫ້ແກ່ບຸກຄົນອື່ນ ໃນການປະຕິບັດໜ້າທີ່ຕາມການມອບໝາຍ.

ໃນກໍລະນີທີ່ຄວາມເສັຽຫາຍ ຫາກເກີດຂຶ້ນຍ້ອນຄວາມຜິດຢ່າງໜັກໜ່ວງ ຂອງຜູ້ຮັບໃຊ້ວຽກແລ້ວ ຜູ້ກ່ຽວຕ້ອງຮັບຜິດຊອບໃຊ້ແທນຄ່າເສັຽຫາຍ ແຕ່ຜູ້ໃຊ້ວຽກນັ້ນ ຕ້ອງໄດ້ຈ່າຍຄ່າເສັຽຫາຍນັ້ນກ່ອນແລ້ວ ຈຶ່ງທວງເອົາການທົດແທນຄ່າເສັຽຫາຍ ທີ່ໄດ້ຈ່າຍໄປແລ້ວນັ້ນຄືນ ຈາກຜູ້ຮັບໃຊ້ວຽກ.

ມາດຕາ 11 : ຄວາມຮັບຜິດຊອບຂອງພໍ່ແມ່ ຜູ້ປົກຄອງ ຫລື ຜູ້ຄຸ້ມຄອງ

ພໍ່ແມ່ ຜູ້ປົກຄອງ ຫລື ຜູ້ຄຸ້ມຄອງ ເຊັ່ນ ໂຮງຮຽນອະນຸບານ,ໂຮງໝໍ ແລະ ອື່ນໆ ເປັນຜູ້ຮັບຜິດຊອບຕໍ່ຄວາມເສັຽຫາຍ ທີ່ເນື່ອງມາຈາກຄວາມຜິດຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຄົນເສັຽຈິດ ທີ່ຢູ່ໃນການຄຸ້ມຄອງຂອງຕົນ.

ມາດຕາ 12 : ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງສັດ

ເຈົ້າຂອງ ຫລື ຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສັຽຫາຍ ທີ່ສັດນັ້ນໄດ້ກໍ່ຂຶ້ນ ຍ້ອນຄວາມຜິດຂອງເຈົ້າຂອງ ຫລື ຜູ້ຄອບຄອງສັດນັ້ນ.

ມາດຕາ 13 : ຄວາມຮັບຜິດຊອບ ຕໍ່ຄວາມເສັຽຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງ

ຄວາມເສັຽຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງໃດໜຶ່ງ ຍອ້ນຄວາມຜິດຂອງຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງນັ້ນ ຜູ້ກ່ຽວຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສັຽຫາຍດັ່ງກ່າວ.

## ພາກທີ II
## ວ່າດວ້ຍ ການເຮັດວຽກງານແທນຜູ້ອື່ນ ແລະການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ

# ໝວດທີ 1
# ການເຮັດວຽກງານແທນຜູ້ອື່ນ

ມາດຕາ 14 : ການເຮັດວຽກງານແທນຜູ້ອື່ນ.

ການເຮັດວຽກງານແທນຜູ້ອື່ນແມ່ນການທີ່ຜູ້ເຮັດວຽກງານແທນ ໄດ້ດຳເນີນວຽກງານໃດໜຶ່ງ ເພື່ອຜົນປະໂຫຍດຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການມອບໝາຍຈາກຜູ້ນັ້ນ ເຊັ່ນ: ການສ້ອມແປງເຮືອນໃຫ້ຜູ້ອື່ນ ໃນເວລາຜູ້ນີ້ຫາກບໍ່ຢູ່ແລະອື່ນໆ.

ມາດຕາ 15 : ເງື່ອນໄຂຂອງການເຮັດວຽກງານແທນຜູ້ອື່ນ

ການເຄື່ອນໄຫວ ຂອງຜູ້ເຮັດວຽກງານແທນຜູ້ອື່ນ ຕ້ອງດຳເນີນໄປດ້ວຍເຈດຕະນາດີ ມີຜົນປະໂຫຍດໃຫ້ແກ່ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ. ໃນກໍລະນີ ທີ່ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ຫາກຍັງຢູ່ກັບທີ່ນັ້ນ ການເຮັດວຽກງານແທນຈະດຳເນີນໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກຜູ້ກ່ຽວເສັຽ ກ່ອນ.

ເປົ້າໝາຍ ຂອງການເຮັດວຽກງານແທນຜູ້ອື່ນ ອາດຈະແມ່ນ ການເຄື່ອນໄຫວ ທາງດ້ານກົດໝາຍ ເຊັ່ນ ການໃຊ້ໜີ້ສິນແທນ ຫລື ການເຄື່ອນໄຫວທາງດ້ານວັດຖຸ ເຊັ່ນ ການສອ້ມແປງເຮືອນແທນ.

ມາດຕາ 16 : ຜົນຂອງການເຮັດວຽກງານແທນຜູ້ອື່ນ

ຜູ້ເຮັດວຽກງານແທນຜູ້ອື່ນ ມີພັນທະດັ່ງດຽວກັນກັບຜູ້ຮັບມອບໝາຍ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 67 ຂອງກົດໝາຍ ວ່າດວ້ຍ ຂໍ້ຜູກພັນໃນສັນຍາ, ຕ້ອງຮັບຜິດຊອບ ຕໍ່ທຸກຄວາມເສັຽຫາຍ ທີ່ຕົນໄດ້ກໍ່ຂຶ້ນ ແລະ ຕ້ອງແຈ້ງກ່ຽວກັບການເຮັດວຽກຂອງຕົນ ໃຫ້ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງຊາບ.ຜູ້ເຮັດວຽກງານແທນຕ້ອງສືບຕໍ່ວຽກງານ ທີ່ໄດ້ເລີ່ມມາແລ້ວນັ້ນ ໃຫ້ສຳເລັດ ຫລື ຈົນກ່ວາຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ຫລື ຜູ້ສືບທອດ ຈະມີຄວາມສາມາດດຳເນີນເອງໄດ້.

ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ ມີພັນທະດັ່ງດຽວກັນກັບຜູ້ມອບໝາຍ ໃນການທົດແທນຄ່າໃຊ້ຈ່າຍຕ່າງໆ ທີ່ຈຳເປັນ ແລະມີຜົນປະໂຫຍດ ຖ້າວ່າການເຮັດວຽກງານແທນນັ້ນ ຫາກໄດ້ດຳເນີນໄປດ້ວຍດີ ຫລື ຖ້າວ່າຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງຫາກໄດ້ເຫັນດີຮັບຮອງເອົາ ການເຮັດວຽກງານແທນນັ້ນ.

# ຫມວດທີ 2
# ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ

ມາດຕາ 17 : ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດໂດຍເຈດຕະນາ.

ບຸກຄົນຜູ້ໃດຫາກໄດ້ຮັບຊັບສິ່ງຂອງ ຂອງຜູ້ອື່ນໂດຍເຈດຕະນາ ທັງໆທີ່ຮູ້ວ່າຕົນບໍ່ມີສິດຮັບຊັບສິ່ງຂອງ

ນັ້ນແລ້ວ ບຸກຄົນຜູ້ນັ້ນຕ້ອງສົ່ງຊັບສິ່ງຂອງ ຫລື ມູນຄ່າຂອງຊັບສິ່ງຂອງນັ້ນຄືນໃຫ້ຜູ້ເປັນເຈົ້າຂອງ ພ້ອມທັງໝາກຜົນ ຫລື ດອກເບັ້ຽນັບແຕ່ມື້ໄດ້ຮັບເປັນຕົ້ນໄປ.

ມາດຕາ 18 : ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫລົງຜິດ.

ບຸກຄົນຜູ້ໃດຫາກໄດ້ຮັບຊັບສິ່ງຂອງ ຂອງຜູ້ອື່ນດ້ວຍຄວາມຫລົງຜິດ ບຸກຄົນຜູ້ນັ້ນຕ້ອງສົ່ງຊັບສິ່ງຂອງ ຫລື ມູນຄ່າຂອງຊັບສິ່ງຂອງເຫລົ່ານັ້ນຄືນໃຫ້ຜູ້ເປັນເຈົ້າຂອງ. ຜູ້ເປັນເຈົ້າຂອງຊັບນັ້ນຕ້ອງທົດແທນຄ່າໃຊ້ຈ່າຍໃນການປົກປັກຮັກສາຊັບສິ່ງຂອງໃຫ້ແກ່ຜູ້ຮັບຊັບນັ້ນ.

---

# ໝວດທີ 3

## ຂໍ້ຜູກພັນນອກສັນຍາ ແມ່ນຫຍັງ ?

ກ. <u>ຂໍ້ຜູກພັນທີ່ມາຈາກການກໍ່ຄວາມເສັຍຫາຍ ແມ່ນແນວໃດ ?</u>

ພື້ນຖານຂອງການກຳເນີດຂໍ້ຜູກພັນ ແມ່ນການກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ ຫຼືການຄອບຄອງຊັບຂອງຜູ້ອື່ນຢ່າງຜິດກົດໝາຍ. ຂໍ້ຜູກພັນດັ່ງກ່າວເອີ້ນວ່າ: ຂໍ້ຜູກພັນນອກສັນຍາ ຊຶ່ງເກີດຂຶ້ນບໍ່ແມ່ນຍ້ອນການຕົກລົງ ແຕ່ຫາກແມ່ນຍ້ອນເຫດການທີ່ບົ່ງໄວ້ໃນກົດໝາຍເຊັ່ນ: ການກໍ່ຄວາມເສັຍຫາຍ. ຂໍ້ຜູກພັນນີ້ ແນໃສ່ຟື້ນຟູຊົງເຂດທາງດ້ານຊັບສົມບັດຂອງບຸກຄົນທີ່ໄດ້ຮັບຄວາມເສັຍຫາຍ ຫຼືຂອງບຸກຄົນທີ່ຊັບສິ່ງຂອງ ຂອງຕົນໄດ້ຖືກຜູ້ອື່ນຄອບຄອງ ແລະພ້ອມດຽວກັນນີ້ ກໍແນໃສ່ປົກປັກຮັກສາສິດ ກ່ຽວກັບກຳມະສິດຂອງລັດ, ຂອງລວມໝູ່, ກຳມະສິດສ່ວນຕົວ, ຊີວິດ ແລະສຸຂະພາບຂອງພົນລະເມືອງ.

ການກໍ່ຄວາມເສັຍຫາຍພາໃຫ້ຂໍ້ຜູກພັນເກີດຂຶ້ນ ໝາຍຄວາມວ່າຜູ້ກໍ່ຄວາມເສັຍຫາຍນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ ເວັ້ນເສັຍແຕ່ຄວາມເສັຍຫາຍທີ່ເກີດຂຶ້ນນັ້ນ ຫາກບໍ່ແມ່ນຍ້ອນຄວາມຜິດຂອງຕົນ, ການປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ແລະການປ້ອງກັນຕົວ.

<u>ຕົວຢ່າງ</u>: ຄວາມຜິດຂອງຜູ້ຖືກເສັຍຫາຍ, ທ້າວ ກ ແລ່ນລົດຕຳຕົ້ນໄມ້ແລ້ວຂາຫັກ, ຄວາມເສັຍຫາຍທີ່ເກີດຂຶ້ນນັ້ນ ຜູ້ກ່ຽວຕ້ອງຮັບຜິດຊອບເອົາເອງ;

<u>ຕົວຢ່າງ</u>: ການປະຕິບັດໜ້າທີ່ຂອງແພດຜ່າຕັດ, ໃນເມື່ອມີການຜ່າຕັດແລ້ວ ຜູ້ຖືກຜ່າຕັດເສັຍຊີວິດ ໃນກໍລະນີນີ້ ຜູ້ເປັນແພດຜ່າຕັດ ຈະບໍ່ມີຄວາມຮັບຜິດຊອບ ເພາະວ່າເຮັດຂຶ້ນໃນເວລາປະຕິບັດໜ້າທີ່ ແຕ່ຕ້ອງໄດ້ເບິ່ງຄືນຢູ່ບ່ອນວ່າ: ການຜ່າຕັດນັ້ນ ໄດ້ດຳເນີນໄປຕາມວິຊາສະເພາະ, ໄປຕາມວິຊາການບໍ ?

ການປ້ອງກັນຕົວທີ່ບໍ່ໃຫ້ມີຄວາມຮັບຜິດຊອບ ແລະຖືວ່າເປັນການກະທຳທີ່ຖືກຕ້ອງນັ້ນ ໃຫ້ມີການບຸກລຸກກ່ອນ ແຕ່ການບຸກລຸກນັ້ນ ຕ້ອງໃຫ້ມີຈິງ, ແນ່ນອນ; ເຄື່ອງມືໃນການຕໍ່ສູ້ ຫຼືອຸປະກອນທີ່ນຳໃຊ້ຕ້ອງມີລັກສະນະເທົ່າທຽມກັນ ແລະຕ້ອງເຮັດກັບທີ່ ຫຼືເຮັດຂຶ້ນໃນທັນທີທັນໃດ.

ຂ. ຜູ້ກໍ່ຄວາມເສັຍຫາຍຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ຄືແນວໃດ ?

1. ຄວາມເສຍຫາຍ ໝາຍເຖິງການເປ່ເພ ຫຼືການທຳລາຍສິນບັດທີ່ເປັນວັດຖຸ ຫຼືບໍ່ເປັນວັດຖຸ ຊຶ່ງກົດໝາຍໄດ້ປົກປ້ອງໃຫ້. ຄວາມເສຍຫາຍອາດເກີດຂຶ້ນແກ່ຊີວິດ, ສຸຂະພາບ, ຊັບສິ່ງຂອງ ຫຼືຈິດໃຈຂອງບຸກຄົນອື່ນ.
2. ການກະທຳທີ່ລະເມີດກົດໝາຍ ໝາຍເຖິງການປະພຶດທີ່ຂັດກົດໝາຍຂອງຜູ້ກໍ່ຄວາມເສຍຫາຍ. ການປະພຶດທີ່ຂັດກົດໝາຍອາດຈະແມ່ນການກະທຳ ຫຼືການບໍ່ກະທຳ (ການເມີນເສີຍ) ຂອງບຸກຄົນຜູ້ທີ່ມີພັນທະ, ຖ້າຫາກບຸກຄົນຜູ້ທີ່ກໍ່ຄວາມເສຍຫາຍໄດ້ປະຕິບັດພັນທະ ຫຼືສິດຂອງຕົນຖືກກົດໝາຍແລ້ວ ກໍຈະບໍ່ຖືວ່າການປະຕິບັດຂອງຜູ້ກ່ຽວ ເປັນການກະທຳທີ່ລະເມີດກົດໝາຍ.

ຕົວຢ່າງ: ໜ່ວຍດັບເພີງມ້າງປະຕູ, ທັບແວ່ນເພື່ອມອດໄຟ, ແຕ່ຄວາມເສຍຫາຍທີ່ເນື່ອງມາຈາກສະພາວະຈຳເປັນ ຕ້ອງໄດ້ຮັບການໃຊ້ແທນ.

ໃນຕົວຈິງ ສານອາດຈະໃຫ້ຜູ້ກະທຳ ຫຼືບຸກຄົນທີສາມ ຊຶ່ງໄດ້ຮັບຜົນປະໂຫຍດຈາກການກະທຳຂອງຜູ້ກໍ່ຄວາມເສຍຫາຍນັ້ນ ເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍກໍໄດ້.

3. ສາຍພົວພັນເຫດ ແລະຜົນລະຫວ່າງການກະທຳທີ່ລະເມີດກົດໝາຍກັບຄວາມເສຍຫາຍທີ່ເກີດຂຶ້ນ.
4. ຄວາມຜິດ ໝາຍເຖິງສາຍພົວພັນທາງດ້ານຈິດຕະສາດຂອງບຸກຄົນໃດໜຶ່ງຕໍ່ການກະທຳຂອງຜູ້ກ່ຽວເອງ ແລະຕໍ່ຜົນສະທ້ອນທີ່ເກີດຂຶ້ນ.

ຄວາມຜິດສະແດງອອກດ້ວຍການກະທຳ ຫຼືການເມີນເສີຍ ຊຶ່ງລະເມີດກົດໝາຍ ແລະກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ໂດຍເຈດຕະນາ ຫຼືດ້ວຍຄວາມບໍ່ລະມັດລະວັງ. ຄວາມຮັບຜິດຊອບທາງອາຍາແຕກຕ່າງກັນຢູ່ບ່ອນວ່າ: ຄວາມຮັບຜິດຊອບທາງແພ່ງ ຫຼືການໃຊ້ແທນຄ່າເສຍຫາຍແມ່ນຂຶ້ນກັບລະດັບຄວາມເສຍຫາຍ ໝາຍຄວາມວ່າ: ກໍ່ຄວາມເສຍຫາຍໜ້ອຍ ກໍຮັບຜິດຊອບໜ້ອຍ, ກໍ່ຄວາມເສຍຫາຍຫຼາຍ ກໍຕ້ອງຮັບຜິດຊອບຫຼາຍ ແຕ່ຄວາມຮັບຜິດຊອບທາງອາຍາ ແມ່ນຂຶ້ນກັບຄວາມຜິດ, ຖ້າຫາກຜິດໂດຍເຈດຕະນາ ໂທດກໍໜັກ ແລະຖ້າຫາກຜິດດ້ວຍຄວາມບໍ່ລະມັດລະວັງໂທດກໍເບົາ. ແຕ່ໃຫ້ເຂົ້າໃຈວ່າ: ການຂີ່ລົດຕຳຄົນແລ້ວ ພາໃຫ້ມີການເສຍຊີວິດນັ້ນ ແມ່ນມີຄວາມຮັບຜິດຊອບທັງສອງຢ່າງຄື: ທາງແພ່ງ ແລະທາງອາຍາ. ໃນກໍລະນີນີ້ ຜູ້ກະທຳຜິດ ນອກຈາກຈະຈ່າຍຄ່າເສຍຫາຍທາງແພ່ງໃຫ້ແກ່ຜູ້ຖືກເສຍຫາຍແລ້ວ ຜູ້ກ່ຽວຕ້ອງຮັບຜິດຊອບທາງອາຍາຕື່ມອີກ, ບໍ່ໝາຍຄວາມວ່າ: ໃຊ້ແທນຄ່າເສຍຫາຍແລ້ວໂທດທາງອາຍາຈະຕົກໄປ. ການໃຊ້ແທນຄ່າເສຍຫາຍທາງແພ່ງ ໃນຄະດີອາຍາຫາກໄດ້ປະຕິບັດສຳເລັດແລ້ວ ຈະເປັນເງື່ອນໄຂທີ່ພາໃຫ້ໄດ້ຮັບການຫຼຸດຜ່ອນໂທດທາງອາຍາ.

ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ, ຂອງພໍ່ແມ່, ຜູ້ປົກຄອງ ຫຼືຜູ້ຄຸ້ມຄອງ, ຂອງຜູ້ເປັນເຈົ້າຂອງ ຫຼືຜູ້ຄອບຄອງສັດ ແລະຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງໄດ້ກຳນົດໄວ້ໃນມາດຕາ 10, 11, 12 ແລະ 13 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນນອກສັນຍາ.

ພໍ່ແມ່, ຜູ້ປົກຄອງ ຫຼືຜູ້ຄຸ້ມຄອງເຊັ່ນ: ໂຮງຮຽນອະນຸບານ, ໂຮງໝໍ ແລະອື່ນໆ ເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງມາຈາກຄວາມຜິດຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫຼືເສຍຈິດທີ່ຢູ່ໃນການຄຸ້ມຄອງຂອງຕົນ. ຜູ້ໃຊ້ວຽກຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຜູ້ຮັບໃຊ້ວຽກຂອງຕົນໄດ້ກໍ່ຂຶ້ນໃຫ້ແກ່ບຸກຄົນ

ອື່ນໃນການປະຕິບັດໜ້າທີ່ຕາມການມອບໝາຍ. ເມື່ອຄວາມເສັຍຫາຍຫາກເກີດຂຶ້ນຍ້ອນຄວາມຜິດຢ່າງໜັກຂອງຜູ້ຮັບໃຊ້ວຽກແລ້ວ ຜູ້ກ່ຽວຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ແຕ່ຜູ້ໃຊ້ນັ້ນຕ້ອງໄດ້ຈ່າຍຄ່າເສັຍຫາຍນັ້ນກ່ອນແລ້ວ ຈຶ່ງທວງເອົາການທົດແທນຄ່າເສັຍຫາຍທີ່ໄດ້ຈ່າຍໄປແລ້ວນັ້ນຄືນຈາກຜູ້ຮັບໃຊ້ວຽກ.

ເຈົ້າຂອງ ຫຼືຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ການເສັຍຫາຍທີ່ສັດນັ້ນ ໄດ້ກໍ່ຂຶ້ນ ຍ້ອນຄວາມຜິດຂອງເຈົ້າຂອງ ຫຼືຜູ້ຄອບຄອງສັດນັ້ນ.

ຜູ້ໄດ້ຮັບມອບໝາຍຈະຕ້ອງປະຕິບັດໜ້າທີ່ຂອງຕົນ ຄືກັນກັບໜ້າທີ່ຂອງຜູ້ມອບໝາຍ ຕາມທີ່ບົ່ງໄວ້ໃນມາດຕາ 67 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ. ຜູ້ຮັບມອບໝາຍຈະຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍ ທີ່ເນື່ອງມາຈາກຄວາມຜິຂອງຕົນເອງ ແລະຈະຕ້ອງແຈ້ງໃຫ້ເຈົ້າຂອງ ຫຼືຜູ້ຄອບຄອງກ່ຽມກັບການປະຕິບັດວຽກງານຂອງຕົນ.

ຖ້າຄວາມເສັຍຫາຍທີ່ຫຼາຍຄົນໄດ້ເປັນຜູ້ກໍ່ຂຶ້ນ ແມ່ນວ່າບຸກຄົນທີ່ໄດ້ຮ່ວມກັນກໍ່ຄວາມເສັຍຫາຍນັ້ນຕ້ອງຮັບຜິດຊອບຮ່ວມກັນ ຕໍ່ຄວາມເສັຍຫາຍທີ່ໄດ້ກໍ່ຂຶ້ນ. ສານອາດຈະໃຫ້ຜູ້ໃດຜູ້ໜຶ່ງ ຫຼືຫຼາຍຄົນໃນຈຳນວນຜູ້ກໍ່ຄວາມເສັຍຫາຍນັ້ນ ໃຊ້ແທນຄ່າເສັຍຫາຍທັງໝົດກ່ອນກໍໄດ້ ແຕ່ຜູ້ນີ້ມີສິດທວງເອົານຳບຸກຄົນທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນຄືນ.

ການຄິດໄລ່ການໃຊ້ແທນຄ່າເສັຍຫາຍ ແລະຄ່າປ່ວຍການ ຕ້ອງໃຫ້ສອດຄ່ອງກັບຄວາມຮັບຜິດຊອບຂອງຜູ້ກໍ່ຄວາມເສັຍຫາຍ. ໃນກໍລະນີທີ່ຜູ້ຖືກເສັຍຫາຍ ຫາກມີຄວາມຜິດ ຜູ້ກ່ຽວກໍຕ້ອງມີສ່ວນຮັບຜິດຊອບຕໍ່ຄວາມເສັຍຫາຍ ແລະຄ່າປ່ວຍການນັ້ນເໝືອນກັນ. ນອກຈາກຄ່າເສັຍຫາຍແລ້ວ ຜູ້ກໍ່ຄວາມເສັຍຫາຍອາດຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການອີກເຊັ່ນ: ລາຍຮັບ ຊຶ່ງຜູ້ກ່ຽວຖືກເສັຍຫາຍ ຄວນຈະໄດ້, ຄ່າໃຊ້ຈ່າຍເພີ້ມຂອງຜູ້ຖືກເສັຍຫາຍ ຊຶ່ງເນື່ອງມາຈາກການກະທຳຜິດ.

ຄ. <u>ຂໍ້ຜູກພັນທີ່ມາຈາກການຄອບຄອງຊັບຂອງຜູ້ອື່ນຢ່າງຜິດກົດໝາຍ ເປັນແນວໃດ ?</u>

ຂໍ້ຜູກພັນມາຈາກການຄອບຄອງຊັບຂອງຜູ້ອື່ນຢ່າງຜິດກົດໝາຍ ແມ່ນສາຍພົວພັນ ຊຶ່ງບຸກຄົນຜູ້ທີ່ຄອບຄອງຊັບຂອງຜູ້ອື່ນ ໂດຍບໍ່ມີພື້ນຖານທີ່ບົ່ງໄວ້ໃນກົດໝາຍ ຫຼືໃນສັນຍາ ຕ້ອງສົ່ງສິ່ງຂອງທີ່ຕົນຄອບຄອງ ໂດຍບໍ່ມີພື້ນຖານນັ້ນຄືນ ໃຫ້ຜູ້ເປັນເຈົ້າຂອງ, ສ່ວນຜູ້ທີ່ເປັນເຈົ້າຂອງນັ້ນ ກໍມີສິດທວງໃຫ້ຜູ້ທີ່ຄອບຄອງສິ່ງຊັບນັ້ນຄືນແກ່ຕົນ.

ການຄອບຄອງຊັບຂອງຜູ້ອື່ນ ໝາຍເຖິງການເພີ້ມຊັບຂອງຜູ້ທີ່ຄອບຄອງຂຶ້ນ ແຕ່ພ້ອມດຽວກັນນັ້ນ ກໍແມ່ນການຫຼຸດຊັບຂອງຜູ້ອື່ນລົງ.

ບຸກຄົນໃດຫາກໄດ້ຮັບຊັບຂອງ ຂອງຜູ້ອື່ນ ໂດຍເຈດຕະນາທັງທີ່ຮູ້ວ່າຕົນບໍ່ມີສິດຮັບຊັບສິ່ງຂອງນັ້ນ ແລ້ວບຸກຄົນຜູ້ນັ້ນຕ້ອງສົ່ງຊັບສິ່ງຂອງ ຫຼືມູນຄ່າຂອງຊັບສິ່ງຂອງນັ້ນຄືນໃຫ້ຜູ້ເປັນເຈົ້າຂອງ ພ້ອມທັງໝາກຜົນ ຫຼືດອກເບັ້ຍ ນັບແຕ່ມື້ໄດ້ຮັບເປັນຕົ້ນໄປ. ບຸກຄົນໃດຫາກໄດ້ຮັບຊັບສິ່ງຂອງ ຂອງຜູ້ອື່ນດ້ວຍຄວາມຫຼົງຜິດ ບຸກຄົນຜູ້ນັ້ນຕ້ອງສົ່ງຊັບສິ່ງຂອງ ຫຼືມູນຄ່າຂອງຊັບສິ່ງຂອງເຫຼົ່ານັ້ນຄືນ ໃຫ້ຜູ້ເປັນເຈົ້າຂອງ. ຜູ້ເປັນເຈົ້າຂອງຊັບນັ້ນ ຕ້ອງທົດແທນຄ່າໃຊ້ຈ່າຍໃນການປົກປັກຮັກສາຊັບສິ່ງຂອງໃຫ້ແກ່ຜູ້ຮັບຊັບນັ້ນ.

ໝວດທີ IV. <u>ມູນມໍຣະດົກ ແລະການສືບທອດມູນມໍຣະດົກ ແມ່ນແນວໃດ ?</u>

ກ. ມູນມໍຣະດົກ ແມ່ນຫຍັງ ?

ກ່ອນອື່ນໝົດຕ້ອງເຂົ້າໃຈວ່າ ມູນມໍຣະດົກ ແມ່ນຊັບສົມບັດທຸກປະເພດ ລວມທັງສິດ ແລະພັນທະຕ່າງໆ ທີ່ມີລັກສະນະຊັບສົມບັດຂອງຜູ້ເສຍຊີວິດ ເວັ້ນເສຍແຕ່ສິດ ແລະພັນທະ ຊຶ່ງກົດໝາຍ ຫຼືສັນຍາໄດ້ກຳນົດໄວ້ໃຫ້ຜູ້ເສຍຊີວິດຕ້ອງໄດ້ປະຕິບັດດ້ວຍຕົນເອງ. ໃນນີ້ບາງສິດ ແລະພັນທະສ່ວນຕົວ ທີ່ບໍ່ມີລັກສະນະຊັບສົມບັດຂອງຜູ້ເສຍຊີວິດ (ເຈົ້າມູນມໍຣະດົກ) ອາດຈະແມ່ນມູນມໍຣະດົກກໍໄດ້.

ຕົວຢ່າງ: ມູນມໍຣະດົກຂອງທ້າວ ສີ ອາດຈະແມ່ນເຮືອນ, ລົດ, ງົວ, ຄວາຍ, ເງິນຄຳ, ໂທລະທັດ ແລະອື່ນໆ ລວມທັງສິດ ທວງເອົາຄ່າເສຍຫາຍຕ່າງໆ ແລະໜີ້ສິນຂອງຜູ້ເສຍຊີວິດ ຍົກເວັ້ນບາງສິດ ແລະພັນທະຂອງຜູ້ເສຍຊີວິດ ເຊັ່ນ: ສິດໃນການສະແດງເປັນຕົວລະຄອນ. ໃນລະຄອນໂທລະທັດ, ພັນທະໃນການແຕ່ງບົດເພງ ຫຼືກາບກອນຊື່ສຽງ ແລະກຽດສັກສີຂອງຜູ້ເສຍຊີວິດ ອາດຈະເປັນມູນມໍຣະດົກກໍໄດ້.

ມູນມໍຣະດົກ, ກ່ອນອື່ນໝົດ ແມ່ນສິດ ກ່ຽວກັບກຳມະສິດສ່ວນຕົວ, ເຮືອນຢູ່, ລົດ, ດິນບ້ານ, ດິນນາ, ດິນສວນ, ເຄື່ອງເຮືອນ, ສິ່ງຂອງອຳນວຍຄວາມສະດວກ, ເຄື່ອງໃຊ້ສອຍຂອງຜູ້ເສຍຊີວິດ ແລະອື່ນໆ. ສິດກ່ຽວກັບຂໍ້ຜູກພັນຂອງເຈົ້າມູນມໍຣະດົກຈະຕົກທອດ; ຕົວຢ່າງ: ສິດທວງເອົາຄ່າແຮງງານ (ເງິນເດືອນ) ທີ່ຍັງບໍ່ທັນໄດ້ຮັບ, ການຈ່າຍໜີ້ສິນທົດແທນປະກັນໄພຕາມສັນຍາປະກັນໄພ ກ່ຽວກັບການເສຍຫາຍຊັບສົມບັດ, ຄ່າບຳເນັດ ຫຼືລາງວັນ ກ່ຽວກັບການປະພັນບົດເລື່ອງຕ່າງໆ ແລະອື່ນໆ. ພັນທະພື້ນຖານທີ່ຕົກທອດໃຫ້ແກ່ຜູ້ສືບທອດ ແມ່ນໜີ້ສິນຂອງເຈົ້າມູນມໍຣະດົກ ແຕ່ບາງພັນທະນີ້ ອາດຈະແມ່ນພັນທະສ່ວນຕົວທີ່ບໍ່ມີລັກສະນະຊັບສົມບັດ, ຕົວຢ່າງ: ພັນທະໃນການປົກປັກຮັກສາຜົນງານ ຊຶ່ງບໍ່ໃຫ້ບຸກຄົນອື່ນລະເມີດໄດ້.

ລວມຄວາມແລ້ວ ບາງສິດ ແລະພັນທະທີ່ມີລັກສະນະຊັບສົມບັດຂອງຜູ້ເສຍຊີວິດ ຊຶ່ງບໍ່ສາມາດມອບໃຫ້ບຸກຄົນອື່ນໄດ້ ໃນເວລາຍັງມີຊີວິດຢູ່ນັ້ນ ກໍຈະບໍ່ຕົກທອດໃຫ້ແກ່ຜູ້ສືບທອດເລີຍເຊັ່ນ: ສິດ ແລະພັນທະຕາມສັນຍາແຮງງານ.

ການສືບທອດມູນມໍຣະດົກ ແມ່ນການຕົກທອດຂອງຊັບສົມບັດ, ສິດ ແລະພັນທະທີ່ມີລັກສະນະຊັບສົມບັດ ແລະບາງສິດ ແລະພັນທະສ່ວນຕົວ ທີ່ບໍ່ມີລັກສະນະຊັບສົມບັດຂອງຜູ້ເສຍຊີວິດໃຫ້ແກ່ຜູ້ທີ່ມີສິດສືບທອດຕາມກົດໝາຍ ຫຼືຕາມພິໄນກຳ.

ສິດຂອງຜູ້ສືບທອດ ແມ່ນໄດ້ຮັບການປົກປ້ອງດ້ວຍສິດສະເໝີກັນ ໂດຍບໍ່ຂຶ້ນກັບຕົ້ນກຳເນີດ, ຖານະທາງດ້ານເສດຖະກິດ ແລະສັງຄົມ, ເຊື້ອຊາດ, ຊົນຊາດ, ພາສາ, ເພດ, ລະດັບວັດທະ ນະທຳ, ອາຊີບ, ສາສະໜາ, ພູມລຳເນົາ ແລະອື່ນໆ. ເຈົ້າມູນມໍຣະດົກຈະເປັນບຸກຄົນເທົ່ານັ້ນ. ສ່ວນນິຕິບຸກຄົນພາຍຫຼັງໄດ້ຖືກຍຸບເລີກ ຫຼືລົ້ມລະລາຍແລ້ວ ກໍຈະບໍ່ມີການສືບທອດແຕ່ຢ່າງໃດ. ເຈົ້າມູນມໍລະດົກມີທັງພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ. ເຈົ້າມູນມໍຣະດົກອາດຈະເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ເພາະວ່າພື້ນຖານຂອງການສືບທອດນັ້ນ ບໍ່ໄດ້ແມ່ນເຈດຈຳນົງຂອງຜູ້ເສຍຊີວິດ ແຕ່ຫາກແມ່ນການເສຍຊີວິດຂອງຄົນນັ້ນເອງ (ເຫດການ).

ບຸກຄົນ, ນິຕິບຸກຄົນ ເວົ້າລວມອາດຈະເຂົ້າຮ່ວມໃນຖານະເປັນຜູ້ສືບທອດ. ສືບທອດແມ່ນບໍ່ຂຶ້ນກັບຄວາມເປັນພົນລະເມືອງ (ສັນຊາດ) ຂອງຜູ້ສືບທອດ. ຊາວຕ່າງດ້າວ, ບຸກຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ

ສາມາດຮັບເອົາສິດ ແລະພັນທະຕາມການສືບທອດ ຍ້ອນວ່າພວກກ່ຽວນີ້ ໄດ້ນຳໃຊ້ຄວາມສາມາດທາງດ້ານກົດໝາຍຢູ່ໃນ ສປປລາວ ເທົ່າທຽມກັນກັບພົນລະເມືອງລາວ.

ຂ. <u>ການເປີດການສືບທອດແນວໃດ ?</u>

ສາຍພົວພັນ ກ່ຽວກັບການສືບທອດມູນມໍຣະດົກ ເກີດຂຶ້ນຍ້ອນນິຕິເຫດເທົ່ານັ້ນ ຊຶ່ງແມ່ນ ການເສັຍຊີວິດຂອງບຸກຄົນໃດບຸກຄົນໜຶ່ງ ຫຼືການຕັດສິນວ່າ: ບຸກຄົນໃດໜຶ່ງເປັນຜູ້ເສັຍຊີວິດ. ການສືບທອດຈະເລີ້ມເປີດຂຶ້ນນັບແຕ່ມື້ທີ່ເຈົ້າມູນມໍຣະດົກ ໄດ້ເສັຍຊີວິດເປັນຕົ້ນໄປ. ໃນກໍລະນີທີ່ເຈົ້າມູນມໍຣະດົກຫາກໄດ້ຖືກສານຕັດສິນວ່າເປັນຜູ້ເສັຍຊີວິດແລ້ວ ກໍໃຫ້ເລີ້ມແຕ່ມື້ທີ່ສານອອກຄຳຕັດສິນເປັນຕົ້ນໄປ.

<u>ຕົວຢ່າງ</u>: ການເສັຍຊີວິດຂອງທ້າວ ກ ຫຼືການທີ່ສານໄດ້ຕັດສິນວ່າ: ທ້າວ ກ ໄດ້ເສັຍຊີວິດ ແລ້ວນັ້ນ ພາໃຫ້ສາຍພົວພັນ ກ່ຽວກັບການສືບທອດ ຫຼືພາໃຫ້ມີການສືບທອດເກີດຂຶ້ນ ເລີ້ມແຕ່ມື້ທີ່ທ້າວ ກ ໄດ້ເສັຍຊີວິດ ຫຼືນັບແຕ່ມື້ສານໄດ້ຕັດສິນວ່າ: ທ້າວ ກ ໄດ້ເສັຍຊີວິດເປັນຕົ້ນໄປ.

ວັນເວລາເປີດການສືບທອດມີຄວາມໝາຍສຳຄັນທາງດ້ານກົດໝາຍ. ໃນວັນເວລານີ້ຕ້ອງໄດ້ກຳນົດຈຳນວນມູນມໍຣະດົກ, ຜູ້ສືບທອດ, ວັນເວລາຮັບເອົາມູນມໍລະດົກ ຫຼືສະລະມູນມໍຣະດົກ, ການແກ້ໄຂບັນຫາ ກ່ຽວກັບສິດ ແລະພັນທະທີ່ຕົກທອດໃຫ້ແກ່ຜູ້ສືບທອດ.

ໃນສະພາບການໃດໜຶ່ງທີ່ແນ່ນອນ (ຕົວຢ່າງ: ເຫດບັງເອີນ) ໃນມື້ດຽວກັນນັ້ນ ອາດມີເຫດການເສັຍຊີວິດຂອງຫຼາຍຄົນພ້ອມກັນທີ່ສາມາດສືບທອດຊຶ່ງກັນ ແລະກັນໄດ້ (ຍາດຊັ້ນຈຳ, ຄູ່ຜົວເມັຍ). ໃນກໍລະນີນີ້ ການສືບທອດຈະເປີດຂຶ້ນເປັນແຕ່ລະຄົນໄປ ຍ້ອນວ່າພວກກ່ຽວໄດ້ເສັຍຊີວິດໄປໃນເວລາດຽວກັນ.

ບ່ອນເປີດການສືບທອດມູນມໍຣະດົກກໍມີຄວາມໝາຍສຳຄັນ ຍ້ອນວ່າເປັນບ່ອນທີ່ພະນັກງານທະບຽນສານແຫ່ງລັດ ຫຼືຫ້ອງການບ້ານຈະວາງມາດຕະການປົກປັກຮັກສາ, ປະກອບເອກະສານ ກ່ຽວກັບສິດສືບທອດ ແລະຮັບເອົາຄຳຮ້ອງຈາກເຈົ້າໜີ້ຂອງເຈົ້າມູນມໍຣະດົກ. ບ່ອນເປີດການສືບທອດ ແມ່ນບ່ອນຢູ່ປະຈຳສຸດທ້າຍຂອງເຈົ້າມູນມໍຣະດົກ, ຖ້າວ່າບ່ອນຢູ່ຂອງເຈົ້າມູນມໍຣະດົກນັ້ນ ຫາກບໍ່ຈະແຈ້ງກໍໃຫ້ຖືເອົາບ່ອນທີ່ເປັນພື້ນຖານສຳຄັນຕັ້ງຢູ່ເປັນບ່ອນເປີດ.

ໃນກໍລະນີທີ່ບຸກຄົນໃດໜຶ່ງ ຊຶ່ງບໍ່ມີບ່ອນຢູ່ປະຈຳ, ຫາກໄດ້ເສັຍຊີວິດຢູ່ຕ່າງປະເທດສາຍພົວພັນກ່ຽວກັບການສືບທອດ ກໍຈະປະຕິບັດຕາມກົດໝາຍຂອງປະເທດທີ່ເຈົ້າມູນມໍຣະດົກນັ້ນ ມີບ່ອນຢູ່ປະຈຳສຸດທ້າຍ.

ໃນບ່ອນເປີດການສືບທອດນັ້ນ ຜູ້ສືບທອດທັງໝົດ ຫຼືບາງຄົນອາດຈະບໍ່ມີໜ້າເຂົ້າມາຮ່ວມ ນຳ. ໃນກໍລະນີນີ້ ສຳນັກງານທະບຽນສານແຫ່ງລັດ ຫຼືຫ້ອງການບ້ານ ບ່ອນທີ່ເປີດການສືບທອດນັ້ນ ຕ້ອງວາງມາດຕະການປົກປັກຮັກສາ ຫຼືແຕ່ງຕັ້ງຜູ້ຄຸ້ມຄອງ ເພື່ອຮັບປະກັນຜົນປະໂຫຍດຂອງລັດ, ບັນດາຜູ້ສືບທອດ ແລະເຈົ້າໜີ້. ສິດ ແລະພັນທະຂອງຜູ້ຄຸ້ມຄອງນັ້ນ ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ.

ຄ. <u>ປະເພດຂອງການສືບທອດມູນມໍຣະດົກມີຫຍັງແດ່ ?</u>

1. ພື້ນຖານຂອງການສືບທອດມູນມໍຣະດົກມີສອງປະເພດຄື: ຕາມກົດໝາຍ ແລະພິໄນກຳ.

1.1. ການສືບທອດຕາມກົດໝາຍ.

ການສືບທອດມູນມໍລະດົກຕາມກົດໝາຍ ແມ່ນການສືບທອດໃນເງື່ອນໄຂ ແລະຕາມລະບຽບການທີ່ໄດ້ບົ່ງໄວ້ໃນກົດໝາຍ ຊຶ່ງເຈົ້າມູນມໍຣະດົກບໍ່ສາມາດປ່ຽນແປງໄດ້. ສິດ ແລະພັນທະຂອງເຈົ້າມູນມໍຣະດົກຕົກທອດໃຫ້ແກ່ຜູ້ສືບທອດທີ່ກົດໝາຍໄດ້ກຳນົດໄວ້.

ການສືບທອດມູນມໍຣະດົກຕາມກົດໝາຍຈະມີຂຶ້ນໄດ້ໃນກໍລະນີ:

- ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກຳ;
- ພິໄນກຳເປັນໂມຄະ ຫຼືຜູ້ສືບທອດຕາມພິໄນກຳນັ້ນ ໄດ້ເສັຍຊີວິດ ກ່ອນການເປີດການສືບທອດ;
- ຜູ້ສືບທອດຕາມພິໄນກຳນັ້ນ ຫາກບໍ່ຮັບເອົາການສືບທອດ;
- ມູນມໍຣະດົກທີ່ຍັງເຫຼືອຈາກການສືບທອດຕາມພິໄນກຳ.

ຖ້າຫາກບໍ່ມີຜູ້ສືບທອດຕາມກົດໝາຍ ແລະພິໄນກຳ ຫຼືບໍ່ມີຜູ້ສືບທອດຄົນໃດຮັບເອົາມູນມໍຣະດົກ ຫຼືຜູ້ສືບທອດທັງໝົດເສັຍສິດສືບທອດແລ້ວ ສິດ ແລະພັນທະຂອງຜູ້ເສັຍຊີວິດຈະຕົກທອດໃຫ້ແກ່ລັດ. ມໍລະດົກອາດຈະຍົກເປັນກຳມະສິດຂອງລັດຕາມເຈດຈຳນົງຂອງເຈົ້າມູນມໍຣະດົກໂດຍພິໄນກຳ.

ກົດໝາຍຍັງໄດ້ກຳນົດການເສັຍສິດໃນການຮັບ ແລະຜູ້ເສັຍສິດສືບທອດມູນມໍຣະດົກໄວ້ໃນມາດຕາ 8 ແລະ 9 ຂອງກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ.

ໃນການສືບທອດມູນມໍຣະດົກຕາມກົດໝາຍ ບຸກຄົນ ຊຶ່ງມີສິດ ແລະພັນທະຂອງຜູ້ເສັຍຊີວິດຕົກທອດໃຫ້ນັ້ນ ໄດ້ບົ່ງໄວ້ໃນກົດໝາຍ. ຜູ້ສືບທອດມູນມໍລະດົກມີ:

- ລູກ (ລູກຄີງ, ລູກລ້ຽງ, ລູກນ້ຳ);
- ຜົວ ຫຼືເມັຍຂອງເຈົ້າມູນມໍຣະດົກທີ່ຍັງມີຊີວິດຢູ່.

ຖ້າວ່າເຈົ້າມູນມໍຣະດົກຫາກບໍ່ມີລູກ, ບໍ່ມີຜົວ ຫຼືເມັຍແລ້ວ ຍາດພີ່ນ້ອງຂອງເຈົ້າມູນມໍຣະດົກນັ້ນ ກໍມີສິດສືບທອດມູນມໍຣະດົກຕາມລຳດັບດັ່ງຕໍ່ໄປນີ້:

- ຍາດສາຍຕັ້ງ: ພໍ່ແມ່ ຫຼືປູ່ຍ່າ, ພໍ່ເຖົ້າແມ່ເຖົ້າ ຫຼືທວດ;
- ຍາດພີ່ນ້ອງສາຍຂວາງ: ອ້າຍ, ເອື້ອຍ, ນ້ອງ ຫຼືລຸງປ້າ, ອາວອາ, ນ້າບ່າວ ນ້າສາວ ຫຼືຫຼານ;
- ລັດ ຫຼືນິຕິບຸກຄົນ ຫຼືບຸກຄົນອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ.

ໃນການແບ່ງປັນມູນມໍຣະດົກນັ້ນ ຖ້າຫາກຜູ້ໃດຫາກເປັນຍາດຊັ້ນຈຳກັບເຈົ້າມູນມໍຣະດົກ ແມ່ນຜູ້ນັ້ນເປັນຜູ້ໄດ້ຮັບກ່ອນ. ສ່ວນຜູ້ທີ່ຢູ່ລຳດັບຕໍ່ໄປນັ້ນຈະໄດ້ຮັບກໍຕໍ່ເມື່ອຫາກບໍ່ມີຍາດຊັ້ນຈຳຂອງເຈົ້າມູນມໍຣະດົກເທົ່ານັ້ນ. ນອກຈາກນີ້ແລ້ວ ຫົວໜ້າຄອບຄົວ ແລະຜູ້ຮັບໃຊ້ກໍມີສິດສືບທອດມູນມໍຣະດົກຂອງກັນ ແລະກັນ ຖ້າວ່າແຕ່ລະຄົນນັ້ນ ຫາກບໍ່ມີຜູ້ສືບທອດຈັກຄົນ ແລະສຳລັບຜູ້ຮັບໃຊ້ນັ້ນຕ້ອງໄດ້ຢູ່ໃນຄອບຄົວນັ້ນ ແຕ່ສາມປີຂຶ້ນໄປ (ມາດຕາ 21 ກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ).

ສຳລັບຜູ້ທີ່ມັ່ງມຄາບສິ່ງສະການ ຫຼືຜູ້ທີ່ບົວລະບັດຂັດສີ ຜູ້ທີ່ເສັຍຊີວິດນັ້ນ ຈະບໍ່ມີສິດສືບທອດເປັນພິເສດ ຫຼືບໍ່ມີສິດໄດ້ຮັບພູດສ່ວນແບ່ງປັນຫຼາຍກວ່າຜູ້ສືບທອດຜູ້ອື່ນໆ ຫຼືບໍ່ມີສິດຍົກພູດໜຶ່ງໄວ້ສະເພາະຕ່າງຫາກ ເວັ້ນເສັຍແຕ່ເຈົ້າມູນມໍຣະດົກຫາກໄດ້ຂຽນພິໄນກຳໄວ້ໃຫ້ເທົ່ານັ້ນ. ໃນກໍລະນີທີ່ບຸກຄົນດັ່ງກ່າວ ຫາກໄດ້ກູ້ຢືມ

ເງິນ ຫຼືໃຊ້ຈ່າຍເງິນຕົນເອງ ເພື່ອມັງນຄາບສິ່ງສະການ, ເຮັດບຸນກິນທານ ຫຼືໃນໄລຍະຜ່ານມາໄດ້ບົວລະບັດຂັດສີ ຜູ້ເສຍຊີວິດມີຈຳນວນເທົ່າໃດແລ້ວ ຜູ້ກ່ຽວກໍມີສິດທວງເອົາຄືນຈາກຜູ້ສືບທອດຜູ້ອື່ນໆບົນພື້ນຖານຫຼັກຖານທີ່ຖືກຕ້ອງ ແລະສົມເຫດສົມຜົນ.

ພໍ່ແມ່ທີ່ຖືກຕັດຂາດຈາກຄວາມເປັນພໍ່ແມ່ຕາມຄຳຕັດສິນຂອງສານ ຈະບໍ່ມີສິດສືບທອດມູນມໍຣະດົກຂອງລູກ, ສ່ວນລູກບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ. ຖ້າພໍ່ແມ່ບໍ່ປະຕິບັດພັນທະໃນການລ້ຽງດູລູກຕາມຄຳຕັດສິນຂອງສານ ຈະບໍ່ມີສິດສືບທອດມູນມໍຣະດົກຂອງລູກ. ສ່ວນລູກກໍເຖິງກະສຽນອາຍຸ ຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ.

ຜູ້ມີສິດສືບທອດທີ່ໄດ້ປິດບັງ, ໂຍກຍ້າຍມູນມໍຣະດົກຫຼາຍກວ່າພູດຕົນຈະໄດ້ຮັບນັ້ນ ກໍຈະບໍ່ໄດ້ຮັບມູນມໍລະດົກ ແຕ່ຢ່າງໃດເລີຍ. ແຕ່ຖ້າວ່າການສໍ້ໂກງ, ປິດບັງ, ໂຍກຍ້າຍນັ້ນ ຫາກນ້ອຍກວ່າພູດຂອງຕົນທີ່ຈະໄດ້ຮັບແລ້ວ ກໍຈະບໍ່ໄດ້ຮັບພູດທີ່ຕົນຄວນໄດ້ຮັບນັ້ນຕື່ມອີກ.

ຜູ້ເສຍສິດສືບທອດມູນມໍຣະດົກຕາມກົດໝາຍ ຫຼືພິໄນກຳປະກອບດ້ວຍ:

ກ. ຜູ້ຖືກສານຕັດສິນວ່າໄດ້ມີເຈດຕະນາ ຫຼືພະຍາຍາມໃຫ້ເຈົ້າມູນມໍລະດົກ ຫຼືຜູ້ມີສິດສືບທອດມູນມໍຣະດົກຜູ້ໜຶ່ງເສຍຊີວິດ ຫຼືບາດເຈັບສາຫັດ ເພື່ອຍາດຊິງເອົາມູນມໍຣະດົກ;

ຂ. ຜູ້ທີ່ໄດ້ທຳລາຍ, ປິດບັງ ຫຼືປອມແປງພິໄນກຳທັງໝົດ ຫຼືບາງສ່ວນ;

ຄ. ຜູ້ທີ່ຢູ່ແຂວງ ຫຼືເມືອງດຽວກັນກັບຜູ້ທີ່ເສຍຊີວິດ ເມື່ອຮູ້ຂ່າວການເສຍຊີວິດແລ້ວ ຫາກບໍ່ມາມັງນຄາບສິ່ງສະການໂດຍບໍ່ມີເຫດຜົນ;

ງ. ຜູ້ທີ່ໄດ້ຂົ່ມຂູ່ເຈົ້າມູນມໍຣະດົກໃຫ້ເຮັດ, ຖອນ ຫຼືປ່ຽນແປງພິໄນກຳທັງໝົດ ຫຼືສ່ວນໃດສ່ວນໜຶ່ງ;

ຈ. ຜູ້ທີ່ໄດ້ປິດບັງຊຸກເຊື່ອງຜູ້ກະທຳຜິດຕໍ່ຊີວິດ ຫຼືສຸຂະພາບຂອງເຈົ້າມູນມໍຣະດົກ ຊຶ່ງໃຫ້ໄດ້ຮັບບາດເຈັບສາຫັດ ຫຼືເສຍອົງຄະ;

ສ. ຜູ້ທີ່ຖືກສານຕັດສິນວ່າໄດ້ຫາຄວາມບໍ່ຈິງໃສ່ເຈົ້າມູນມໍຣະດົກ ຫຼືໃສ່ຜູ້ມີສິດສືບທອດດ້ວຍກັນ.

ບຸກຄົນທີ່ໄດ້ກ່າວມາຂ້າງເທິງນີ້ ຈະເສຍສິດສືບທອດກໍຕໍ່ເມື່ອເຈົ້າມູນມໍຣະດົກ ຫາກໄດ້ສະແດງເຈດຈຳນົງຂອງຕົນ ອອກເປັນລາຍລັກອັກສອນເທົ່ານັ້ນ ເວັ້ນເສຍແຕ່ເຈົ້າມູນມໍຣະດົກຫາກໄດ້ເສຍຊີວິດ. ເຈົ້າມູນມໍຣະດົກອາດຈະລົບລ້າງການເສຍສິດດັ່ງກ່າວນັ້ນກໍໄດ້ ແຕ່ຕ້ອງສະແດງເຈດຈຳນົງຂອງຕົນ ອອກເປັນລາຍລັກອັກສອນ.

ການຮັບເອົາມູນມໍຣະດົກ ໂດຍຜູ້ສືບທອດຈະຕ້ອງໄດ້ເຮັດພາຍໃນຫົກ (6) ເດືອນ ເລີ້ມແຕ່ມື້ວັນທີ່ເປີດພິໄນກຳເປັນຕົ້ນໄປ. ຜູ້ສືບທອດຈະຕ້ອງສະແດງຈຸດປະສົງການຮັບເອົາມູນມໍຣະດົກກັບອົງການທະບຽນສານແຫ່ງລັດ ຫຼືນາຍບ້ານ ບ່ອນທີ່ມີການເປີດມູນມໍຣະດົກ. ໃນກໍລະນີທີ່ຜູ້ສືບທອດໃດໜຶ່ງສະຫຼະສິດໃນການຮັບເອົາມູນມໍຣະດົກ, ຜູ້ທີ່ມີສິດສືບທອດສ່ວນມູນນີ້ຈະຕ້ອງສະແດງຈຸດປະສົງໃນການຮັບເອົາມູນມໍຣະດົກດັ່ງກ່າວ ພາຍໃນກຳນົດເວລາທີ່ເຫຼືອ. ຖ້າວ່າໄລຍະເວລາທີ່ເຫຼືອນ້ອຍກວ່າສາມ (3) ເດືອນ, ຜູ້ທີ່ມີສິດສືບທອດມີສິດຂໍຮ້ອງເພື່ອແກ່ຍາວເວລາອີກ ແຕ່ບໍ່ໃຫ້ກາຍສາມ (3) ເດືອນ.

ລູກຂອງເຈົ້າມູນມໍລະດົກທີ່ຍັງຢູ່ໃນທ້ອງຂອງຜູ້ເປັນແມ່ກໍມີສິດຮັບສ່ວນແບ່ງປັນເຊັ່ນດຽວກັນ. ການແບ່ງປັນລະຫວ່າງລູກຂອງຜູ້ເສຍຊີວິດໃຫ້ປະຕິບັດດັ່ງນີ້: ຖ້າຜູ້ເສຍຊີວິດຫາກມີແຕ່ລູກຄີງເທົ່ານັ້ນມູນມໍຣະດົກທີ່ຕົກທອດແກ່ພວກກ່ຽວກໍໃຫ້ແບ່ງປັນພູດສະເໝີກັນ; ເມື່ອຜູ້ເສຍຊີວິດມີລູກຄີງ, ລູກລ້ຽງ ແລະລູກນ້າ ກໍຈະແບ່ງປັນເປັນພູດເທົ່າທຽມກັນ ບໍ່ວ່າລູກຄີງ, ລູກນ້າ ຫຼືລູກລ້ຽງ. ສໍາລັບລູກນ້ານັ້ນຈະໄດ້ຮັບພຽງແຕ່ມູນມໍຣະດົກທີ່ເປັນສິນສົມສ້າງຂອງຜູ້ທີ່ເສຍຊີວິດເທົ່ານັ້ນ. ລູກລ້ຽງຈະບໍ່ມີສິດສືບທອດມູນມໍຣະດົກຂອງຜູ້ເປັນພໍ່ແມ່ເດີມຂອງຕົນອີກ. ຈະຖືວ່າເປັນລູກລ້ຽງ ແລະມີສິດສືບທອດນັ້ນ ແມ່ນຕ້ອງໃຫ້ມີເອກະສານຢັ້ງຢືນການເປັນລູກລ້ຽງຢ່າງຖືກຕ້ອງ, ໃຫ້ມີການຮັບຮູ້ຈາກຜູ້ທີ່ເສຍຊີວິດ ຫຼືຈາກອ້າຍເອື້ອຍນ້ອງ ຜູ້ເປັນລູກຄີງຂອງຜູ້ທີ່ເສຍຊີວິດ ຫຼືຈາກຜົວ ຫຼືເມັຍຂອງຜູ້ທີ່ເສຍຊີວິດ ຫຼືມີຫຼັກຖານຢັ້ງຢືນຈາກໃບຢັ້ງຢືນການເກີດ, ສໍາມະໂນຄົວ, ບັດປະຈໍາຕົວ, ບັດຜ່ານແດນ ຫຼືເອກະສານທາງລັດຖະການຕ່າງໆ.

ຂໍ້ກໍານົດລະອຽດ ກ່ຽວກັບແບ່ງປັນມູນມໍຣະດົກລະຫວ່າງຜູ້ສືບທອດດ້ວຍກັນ ແມ່ນກໍານົດໃນມາດຕາ 16, 17, 18 ແລະ 19 ຂອງກົດໝາຍວ່າດ້ວຍພື້ນຖານການສືບທອດມູນມໍລະດົກ.

ເມື່ອຜົວ ຫຼືເມັຍຫາກເສຍຊີວິດໄປ ໂດຍປະເມັຍ ຫຼືຜົວ ແລະລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ເສຍຊີວິດ. ສ່ວນສິນສົມສ້າງນັ້ນໃຫ້ແບ່ງເຄິ່ງ, ເຄິ່ງໜຶ່ງໃຫ້ຜົວ ຫຼືຜົວທີ່ຍັງມີຊີວິດຢູ່ນັ້ນມີສິດຄຸ້ມຄອງຊັບທີ່ຕົກທອດເປັນຂອງລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ.

ເມື່ອຜົວ ຫຼືເມັຍຊຶ່ງບໍ່ມີລູກ ຫາກໄດ້ເສຍຊີວິດໄປ ຍັງແຕ່ເມັຍ ຫຼືຜົວ ແລະຍາດສາຍຕັ້ງ, ຍາດສາຍຕັ້ງຈະໄດ້ຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ທີ່ເສຍຊີວິດທັງໝົດຕາມລໍາດັບໃກ້ຊິດກັບຜູ້ທີ່ເສຍຊີວິດ ໂດຍແບ່ງປັນເປັນພູດສະເໝີກັນ. ສ່ວນເມັຍ ຫຼືຜົວທີ່ຍັງມີຊີວິດຢູ່ນັ້ນ ຈະໄດ້ຮັບແຕ່ສ່ວນສິນສົມສ້າງທັງໝົດ ຊຶ່ງຕົກເປັນພູດຂອງຜູ້ທີ່ເສຍຊີວິດເທົ່ານັ້ນ. ເມື່ອຜູ້ທີ່ເສຍຊີວິດຫາກບໍ່ມີລູກ ແລະບໍ່ມີຍາດສາຍຕັ້ງ ແຕ່ຫາກຍັງມີຜົວ ຫຼືເມັຍນັ້ນຍາດພີ່ນ້ອງສາຍຂວາງ ຈະໄດ້ຮັບທີ່ເປັນຊັບເດີມຂອງຜູ້ທີ່ເສຍຊີວິດແຕ່ເຄິ່ງໜຶ່ງເທົ່ານັ້ນ ແລະສິນສົມສ້າງທັງໝົດນັ້ນ ຈະຕົກເປັນພູດຂອງເມັຍ ຫຼືຜົວທີ່ຍັງມີຊີວິດຢູ່. ສໍາລັບຜູ້ສືບທອດມູນມໍຣະດົກທີ່ຍັງບໍ່ທັນເຖິງກະສຽນອາຍຸນັ້ນ ການແບ່ງປັນອາດຈະຍືດເວລາອອກໄປຈົນກວ່າຈະເຖິງກະສຽນອາຍຸ.

ເມື່ອບຸກຄົນທີ່ເປັນຜູ້ສືບທອດຕາມກົດໝາຍໄດ້ເສຍຊີວິດກ່ອນເຈົ້າມູນແລ້ວ ຜູ້ສືບທອດຂອງບຸກຄົນຜູ້ນັ້ນ ກໍມີສິດສືບທອດແທນຜູ້ກ່ຽວຕາມລໍາດັບ.

ເນື້ອໃນລະອຽດຂອງການສືບທອດແທນທີ່ກັນ ໄດ້ຂຽນໄວ້ ມາດຕາ 25 ແລະ 26 ກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ.

1.2. <u>ການສືບທອດມູນມໍຣະດົກຕາມພິໄນກໍາ</u>.

ການສືບທອດມູນມໍຣະດົກຕາມພິໄນກໍາ ແມ່ນການຕົກທອດຂອງສິດ ແລະພັນທະຂອງເຈົ້າມູນມໍຣະດົກທີ່ໄດ້ເສຍຊີວິດໃຫ້ບຸກຄົນທີ່ຕົນເວົ້າ ຫຼືຂຽນໄວ້ໃນພິໄນກໍາໃນເວລາຍັງມີຊີວິດຢູ່.

<u>ຕົວຢ່າງ</u>: ໃນເວລາທີ່ທ້າວ ດໍາ ຍັງມີຊີວິດຢູ່ທ້າວ ດໍາ ໄດ້ເຮັດພິໄນກໍາ ຊຶ່ງໃນນັ້ນໄດ້ມອບເຮືອນຫຼັງໜຶ່ງໃຫ້ທ້າວ ກ, ດິນສວນໜຶ່ງຕອນໃຫ້ທ້າວ ຂ ແລະລົດເກງໜຶ່ງຄັນ ໃຫ້ທ້າວ ຄ. ເມື່ອທ້າວ ດໍາ ເສຍຊີວິດແລ້ວ,

ທ້າວ ກ, ທ້າວ ຂ ແລະ ຄ ແມ່ນມີກໍາມະສິດໃນຊັບສິນດັ່ງກ່າວ ແລະພ້ອມກັນນັ້ນ ກໍມີຄວາມຮັບຜິດຊອບຕໍ່ໜີ້ສິນຂອງຜູ້ເສັຍຊີວິດ.

ພົນລະເມືອງແຕ່ລະຄົນມີສິດເຮັດພິໄນກໍາ ມອບຊັບສິນປັດຂອງຕົນໃຫ້ບຸກຄົນໃດບຸກຄົນໜຶ່ງ ຫຼືຫຼາຍຄົນ, ໃຫ້ລັດ ຫຼືນິຕິບຸກຄົນຕາມເຈດຈໍານົງຂອງຕົນ ກ່ອນເສັຍຊີວິດໃນຂອບເຂດທີ່ກົດໝາຍໄດ້ກໍານົດໄວ້ (ມາດຕາ 33 ກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ).

ເຈົ້າມູນມໍຣະດົກມີສິດກໍານົດຜູ້ສືບທອດສໍາຮອງ ເພື່ອແທນທີ່ຜູ້ສືບທອດຊຶ່ງຕົນໄດ້ກໍານົດໄວ້ກ່ອນນັ້ນ ໃນກໍລະນີທີ່ຜູ້ສືບທອດຜູ້ນີ້ ຫາກໄດ້ເສັຍຊີວິດກ່ອນການເປີດພິໄນກໍາ ຫຼືບໍ່ຮັບເອົາມູນມໍຣະດົກ.

ພິໄນກໍາຕ້ອງເຮັດເປັນລາຍລັກອັກສອນ ແລະຂຽນດ້ວຍມືຂອງເຈົ້າມູນມໍຣະດົກເອງ. ຖ້າຫາກຜູ້ອື່ນຂຽນໃຫ້ ກໍຕ້ອງມີພະຍານຢ່າງໜ້ອຍສາມຄົນເຂົ້າຮ່ວມນໍາ ແຕ່ຕ້ອງຮັກສາຄວາມລັບໄວ້ ຈົນກວ່າຈະມີການເປີດການສືບທອດມູນມໍຣະດົກ. ໃນພິໄນກໍານັ້ນຕ້ອງບອກສະຖານທີ່, ວັນ, ເດືອນ, ປີເຮັດພິໄນກໍາ, ປະເພດ ແລະຈໍານວນຊັບທີ່ຈະມອບ, ຊື່ ແລະນາມສະກຸນຂອງຜູ້ມອບ ແລະຜູ້ຮັບ, ຜູ້ຂຽນ ແລະຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະພະຍານຕ້ອງລົງລາຍເຊັນ ຫຼືແປະໂປ້ໃສ່ພິໄນກໍາ. ພິໄນກໍານັ້ນຫຼັງຈາກເຮັດແລ້ວຕ້ອງໃສ່ຊອງຕິດຄັ່ງແລ້ວນໍາໄປຂຶ້ນທະບຽນທີ່ສໍານັກງານທະບຽນສານແຫ່ງລັດ ຫຼືຫ້ອງການບ້ານບ່ອນເຈົ້າມູນມໍຣະດົກຢູ່.

ຖ້າຫາກວ່າເຈົ້າມູນມໍຣະດົກບໍ່ສາມາດເຮັດພິໄນກໍາເປັນລາຍລັກອັກສອນໄດ້ ຍ້ອນຕົກຢູ່ໃນສະພາບໃດໜຶ່ງເຊັ່ນ: ສຸຂະພາບອ່ອນເພັຍ ແລ້ວຜູ້ກ່ຽວຈະເຮັດພິໄນກໍາທາງປາກເປົ່າກໍໄດ້ ໂດຍຊ້ອງໜ້າພະຍານຢ່າງໜ້ອຍສາມຄົນ. ໃນກໍລະນີທີ່ເຈົ້າມູນມໍຣະດົກນັ້ນໄດ້ກັບຄືນສູ່ສະພາບປົກກະຕິແລ້ວ ນັບແຕ່ເວລານີ້ໄປເຖິງໜຶ່ງເດືອນ ພິໄນກໍາທາງປາກເປົ່າຍັງມີຜົນບັງຄັບໃຊ້ໄດ້ຢູ່.

ໃນກໍລະນີທີ່ເຈົ້າມູນມໍຣະດົກຫາກໄດ້ເຮັດພິໄນກໍາມອບຊັບອັນດຽວກັນເປັນຫຼາຍສະບັບໃຫ້ຫຼາຍຄົນຕ່າງກັນແລ້ວ ພິໄນກໍາສະບັບທີ່ເຮັດຂຶ້ນສຸດທ້າຍນັ້ນ ຈະມີຜົນບັງຄັບໃຊ້ໄດ້.

ພິໄນກໍາທີ່ເຮັດຂຶ້ນ ໂດຍບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ມີເປົ້າໝາຍບໍ່ຈະແຈ້ງ, ເຮັດຂຶ້ນດ້ວຍການຖືກບັງຄັບ, ຫຼອກລວງ, ປອມແປງ ແລະອື່ນໆຈະຖືເປັນໂມຄະ.

ສ່ວນເນື້ອໃນຂອງການປະຕິບັດພິໄນກໍານັ້ນ ໄດ້ກໍານົດໄວ້ໃນມາດຕາ 43 ແລະ 44 ຂອງກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ.

໗. <u>ການຮັບ ແລະການສະຫຼະມູນມໍຣະດົກແນວໃດ ?</u>

ການຮັບມູນມໍຣະດົກ ແມ່ນການສະແດງເຈດຈໍານົງ ເພື່ອຮັບເອົາສິດ ແລະພັນທະຂອງຜູ້ເສັຍຊີວິດທີ່ຕົກທອດໃຫ້ຕາມການສືບທອດ. ເຈດຈໍານົງດັ່ງກ່າວ ຕ້ອງສະແດງອອກໃນການເຂົ້າຮ່ວມຕົວຈິງໃນການຄອບຄອງ ຫຼືການຄຸ້ມຄອງມູນມໍຣະດົກ ຫຼືການຍື່ນຄໍາຮ້ອງຂໍຮັບເອົາມູນມໍຣະດົກຕໍ່ສໍານັກງານທະບຽນສານແຫ່ງລັດ ຫຼືນາຍບ້ານບ່ອນທີ່ເປີດການສືບທອດນັ້ນ.

ຕົວຢ່າງ: ພາຍຫຼັງທີ່ທ້າວ ດຳເສຍຊີວິດແລ້ວ ໃນເວລາເປີດການສືບທອດມູນມໍຣະດົກນັ້ນ, ທ້າວ ກ, ທ້າວ ຂ, ຄ ແລະທ້າວ ງ ເປັນລູກຂອງທ້າວ ດຳ ຕ້ອງບອກວ່າພວກຕົນເຫັນດີເອົາການແບ່ງປັນມູນມໍຣະດົກຂອງຜູ້ເປັນພໍ່ ແລະພ້ອມທີ່ຈະຮັບຜິດຊອບຕໍ່ໜີ້ສິນທີ່ທ້າວ ດຳ ໄດ້ສ້າງຂຶ້ນໃນເວລາມີຊີວິດຢູ່.

ໃນກໍລະນີທີ່ຜູ້ສືບທອດນັ້ນ ຫາກໄດ້ສະຫຼະມູນມໍລະດົກຜູ້ທີ່ຈະຮັບມູນມໍຣະດົກ ຊຶ່ງເປັນພູດຂອງຜູ້ສະຫຼະນັ້ນ ຕ້ອງສະແດງເຈດຈຳນົງຂອງຕົນວ່າ ຈະຮັບເອົາມູນມໍຣະດົກດັ່ງກ່າວ ພາຍໃນໄລຍະເວລາທີ່ຍັງເຫຼືອ. ຖ້າວ່າກຳນົດເວລາທີ່ຍັງເຫຼືອນັ້ນ ຫາກຫຼຸດສາມ (3) ເດືອນ ຜູ້ທີ່ຈະຮັບນັ້ນ ມີສິດຮ້ອງຂໍຕໍ່ສານໃຫ້ຍືດເວລາອອກໄປຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນສາມ (3) ເດືອນ. ສຳນັກງານທະບຽນສານແຫ່ງລັດ ຫຼືຫ້ອງການບ້ານຕ້ອງອອກໃບຢັ້ງຢືນການຮັບມູນມໍຣະດົກໃຫ້ແກ່ຜູ້ສືບທອດໄວ້ ເພື່ອເປັນຫຼັກຖານ.

ຜູ້ສືບທອດຜູ້ໃດຜູ້ໜຶ່ງຈະຂໍແບ່ງປັນມູນມໍຣະດົກ ກໍໄດ້ເວັ້ນເສຍແຕ່ມີສັນຍາທີ່ບົ່ງໄວ້ຢ່າງອື່ນ. ການສະລະມູນມໍຣະດົກ ແມ່ນການສະແດງເຈດຈຳນົງບໍ່ຮັບເອົາມູນມໍຣະດົກໃນພາກຕົວຈິງໃນໄລຍະຫົກ (6) ເດືອນນັບແຕ່ມື້ໄດ້ເປີດການສືບທອດເປັນຕົ້ນໄປ.

ຜູ້ສະລະມູນມໍຣະດົກຕ້ອງສະແດງເຈດຈຳນົງຂອງຕົນ ອອກເປັນລາຍລັກອັກສອນໄວ້ໃນສຳນັກງານທະບຽນສານ ຫຼືຫ້ອງການບ້ານ ໂດຍບອກຊື່ຂອງບຸກຄົນ ຫຼືອົງການຈັດຕັ້ງທີ່ຕົນສະຫຼະໃຫ້. ໃນກໍລະນີທີ່ບໍ່ໄດ້ບົ່ງຊື່ບຸກຄົນ ຫຼືອົງການຈັດຕັ້ງແລ້ວ ມູນມໍຣະດົກນັ້ນ ກໍຈະຕົກເປັນຂອງຜູ້ສືບທອດຜູ້ອື່ນໆຕາມກົດໝາຍ.

ຜູ້ທີ່ໄດ້ສະລະພູດມູນມໍຣະດົກຂອງຕົນ ແລະຜູ້ສືບທອດຂອງຜູ້ກ່ຽວບໍ່ມີສິດທວງເອົາມູນມໍຣະດົກທີ່ໄດ້ສະລະແລ້ວນັ້ນຄືນ.

ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຈະສະລະມູນມໍຣະດົກບໍ່ໄດ້ ເວັ້ນເສຍແຕ່ໄດ້ຮັບຄວາມຍິນດີຂອງພໍ່ແມ່ ຫຼືຜູ້ປົກຄອງເທົ່ານັ້ນ.

ເຈົ້າມູນມໍຣະດົກບໍ່ມີສິດມອບ ຫຼືຍົກຊັບໂດຍໜັງສືມອບ, ຍົກຊັບ ຫຼືໂດຍພິໄນກຳ ມອບຊັບທັງໝົດຂອງຕົນໃຫ້ລູກຜູ້ໃດຜູ້ໜຶ່ງ ຫຼືບຸກຄົນອື່ນເດັດຂາດຖ້າຜູ້ກ່ຽວຍັງມີລູກສືບທອດຢູ່. ການມອບ ຫຼືການຍົກຊັບ ຫຼືເຮັດພິໄນກຳໃຫ້ປະຕິບັດດັ່ງນີ້: ຖ້າເຈົ້າມູນມໍຣະດົກມີລູກຜູ້ໜຶ່ງ ແມ່ນບໍ່ໃຫ້ກາຍເຄິ່ງໜຶ່ງຂອງຊັບທັງໝົດ; ຖ້າມີລູກສອງຄົນ ແມ່ນບໍ່ໃຫ້ກາຍໜຶ່ງສ່ວນສາມຂອງຊັບທັງໝົດ. ຖ້າມີລູກສາມຄົນຂຶ້ນໄປແມ່ນບໍ່ໃຫ້ກາຍໜຶ່ງສ່ວນສີ່.

ເຈົ້າມູນມໍຣະດົກມີສິດກຳນົດຜູ້ສືບທອດສຳຮອງ ເພື່ອແທນທີ່ຜູ້ສືບທອດມູນມໍຣະດົກ ຊຶ່ງຕົນໄດ້ກຳນົດໄວ້ກ່ອນນັ້ນ ເມື່ອຜູ້ສືບທອດຜູ້ນີ້ ຫາກໄດ້ເສຍຊີວິດກ່ອນການເປີດພິໄນກຳ ຫຼືບໍ່ຮັບເອົາມູນມໍຣະດົກ. ຜູ້ຂຽນພິໄນກຳ, ພະຍານໃນພິໄນກຳ ແລະຜົວ ຫຼືເມັຍຂອງພວກກ່ຽວຈະບໍ່ສາມາດຮັບຊັບຕາມພິໄນກຳໄດ້. ບັນຫານີ້ໃຫ້ເຂົ້າໃຈຕື່ມວ່າ ລູກທີ່ຍັງບໍ່ເຖິງກະສຽນອາຍຸຂອງຜູ້ຂຽນພິໄນກຳ ແລະຂອງພະຍານໃນພິໄນກຳກໍຈະເປັນຜູ້ຮັບຊັບຕາມພິໄນກຳນັ້ນ ບໍ່ໄດ້ເຊັ່ນດຽວກັນ. ເຈົ້າມູນມໍຣະ ດົກທີ່ໄດ້ເສຍຊີວິດຫາກໄດ້ມອບຊັບສ່ວນໃດສ່ວນໜຶ່ງ ຕາມພິໄນກຳໃຫ້ຜູ້ສືບທອດມູນມໍຣະດົກຕາມກົດໝາຍຜູ້ໃດຜູ້ໜຶ່ງແລ້ວ ຜູ້ກ່ຽວນັ້ນນອກຈາກຈະໄດ້ຮັບມູນມໍຣະດົກຕາມພິໄນກຳແລ້ວ ກໍຍັງຈະໄດ້ຮັບພູດສ່ວນມູນມໍຣະດົກທີ່ຕົກທອດໃຫ້ຕົນຕາມກົດໝາຍອີກດ້ວຍ.

ເຈົ້າມູນມໍຣະດົກມີສິດແຕ່ງຕັ້ງຜູ້ປົກຄອງຊັບ ເມື່ອຜູ້ກ່ຽວມີຈຸດປະສົງຢາກເຮັດພິໄນກຳມອບຊັບສົມບັດໃຫ້ບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫຼືຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ. ຜູ້ປົກຄອງຊັບອາດຈະ

ແຕ່ງຕັ້ງບຸກຄົນອື່ນເປັນຜູ້ປົກຄອງຊັບແທນຕົນກໍໄດ້. ເວັ້ນເສຍແຕ່ເຈົ້າມູນມໍຣະດົກໄດ້ກໍານົດໄວ້ຢ່າງອື່ນໃນພິໄນກໍາ, ສິດຂອງຜູ້ປົກຄອງຊັບຈະໝົດໄປໃນເມື່ອເດັກນັ້ນ ຫາກເຖິງກະສຽນອາຍຸ ຫຼືຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫາກໄດ້ກັບຄືນສູ່ສະພາບປົກກະຕິແລ້ວ.

ຜູ້ຄຸ້ມຄອງມູນມໍຣະດົກຕ້ອງເຮັດບັນຊີມູນມໍຣະດົກ ໂດຍຊ້ອງໜ້າຜູ້ສືບທອດ, ຖ້າມີຜູ້ສືບທອດຫຼາຍຄົນກໍຕ້ອງເຮັດຊ້ອງໜ້າຢ່າງໜ້ອຍສອງຄົນ ໂດຍໃຫ້ແລ້ວພາຍໃນກໍານົດໜຶ່ງເດືອນ ນັບແຕ່ມື້ທີ່ຖືກແຕ່ງຕັ້ງເປັນຕົ້ນໄປ. ຜູ້ຄຸ້ມຄອງມູນມໍຣະດົກຕ້ອງຮັບເອົາຄໍາຮ້ອງຂອງເຈົ້າໜີ້ ແລະຊໍາລະໜີ້ສິນຂອງເຈົ້າມູນມໍຣະດົກ ກ່ອນຜູ້ສືບທອດຈະຮັບເອົາ. ຜູ້ຄຸ້ມຄອງມູນມໍຣະດົກໃຫ້ບັນດາຜູ້ສືບທອດຕາມພູດຂອງແຕ່ລະຄົນ. ຜູ້ຄຸ້ມຄອງມູນມໍຣະດົກຫາກບໍ່ປະຕິບັດສິດ ແລະໜ້າທີ່ຂອງຕົນ ຫຼືໄດ້ປະຕິບັດດ້ວຍຄວາມປະໝາດ ຫຼືໂດຍບໍ່ມີຄວາມບໍລິສຸດໃຈແລ້ວສໍານັກງານທະບຽນສານ ຫຼືນາຍບ້ານທີ່ກ່ຽວຂ້ອງ ມີສິດລົບລ້າງການແຕ່ງຕັ້ງ ຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວແລ້ວແຕ່ງຕັ້ງຜູ້ຄຸ້ມຄອງໃໝ່ແທນພາຍໃນກໍານົດເຈັດວັນ.

ການຮ້ອງຟ້ອງເອົາມູນມໍຣະດົກ ສາມາດເຮັດຂຶ້ນໄດ້ພາຍໃນກໍານົດ ສາມປີ ນັບແຕ່ມື້ທີ່ເຈົ້າມູນມໍຣະດົກໄດ້ເສຍຊີວິດເປັນຕົ້ນໄປ. ຕໍ່ບັນຫານີ້ໃຫ້ເຂົ້າໃຈວ່າ: ເຫດການການຂັດແຍ່ງ ກ່ຽວກັບມູນມໍຣະດົກ ແມ່ນມີຢ່າງຫຼວງຫຼາຍ ຊຶ່ງສືບຕໍ່ເນື່ອງມາກ່ອນ ການປະກາດໃຊ້ກົດໝາຍວ່າດ້ວຍມູນມໍຣະດົກ ແລະພື້ນຖານຂອງການສືບທອດມູນມໍຣະດົກ, ດັ່ງນັ້ນ ເພື່ອແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ສານຈຶ່ງໄດ້ຮັບເອົາຄໍາຮ້ອງຟ້ອງນັ້ນ ມາພິຈາລະນາແບ່ງປັນຕາມກົດໝາຍ ເຖິງວ່າເວລາຈະລ່ວງກາຍໄປຫຼາຍກວ່າສາມ (3) ປີກໍຕາມ ເວັ້ນເສຍແຕ່ການຂັດແຍ່ງນີ້ຫາກມີການຢັ້ງຢືນຖືກຕ້ອງວ່າມີການແບ່ງປັນ ແລະໄດ້ປະຕິບັດກັນແລ້ວຫຼາຍສິບ (10) ປີ.